# ບົດຮຽນ 14 - ບັບຕິສະມາ - ພາກທີ 2

ໃນບົດຮຽນທີ 13 ພວກເຮົາໄດ້ຮຽນຮູ້ວ່າ:

1) ພຣະຄຸນຂອງພຣະເຈົ້າຍິ່ງໃຫຍ່ກວ່າບາບກຳຂອງພວກເຮົາ.
2) ພຣະຄຸນບໍ່ໄດ້ນຳໄປສູ່ການດຳລົງຊີວິດທີ່ດ້ອຍກວ່າ, ແຕ່ກົງກັນຂ້າມ ມັນກະຕຸ້ນໃຫ້ພວກເຮົາເຮັດສິ່ງທີ່ຖວາຍກຽດແກ່ພຣະຜູ້ເປັນເຈົ້າ.
3) ພຣະຄຸນ ແລະ ການປະຕິບັດແມ່ນມີຄວາມພິເສດສະເພາະຕົວຕໍ່ກັນແລະກັນ. ຖ້າເຈົ້າປະສົມປະສານການປະຕິບັດເຂົ້າກັບພຣະຄຸນແລ້ວ ມັນກໍບໍ່ແມ່ນພຣະຄຸນອີກຕໍ່ໄປ.
4) ປະເດັນທຳອິດໃນຊີວິດຂອງເຮົາ ໃນຖານະເປັນຜູ້ເຊື່ອຄືຈະຕ້ອງຮູ້ບາງສິ່ງບາງຢ່າງ.
5) ພວກເຮົາຕ້ອງຮູ້ວ່າ ພວກເຮົາໄດ້ຮັບບັບຕິສະມາເຂົ້າໃນການຕາຍຂອງພຣະເຢຊູຄຣິດ.
6) ການບັບຕິສະມາໃນໂຣມ ບົດທີ 6 ແມ່ນການດຳເນີນງານຂອງພຣະວິນຍານບໍລິສຸດ. ມັນບໍ່ແມ່ນບັບຕິສະມາດ້ວຍນ້ຳ.

**ຮູ້**

ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ປະເດັນທຳອິດໃນການເດີນກັບພຣະວິນຍານຂອງພວກເຮົາຄືການຮູ້ບາງສິ່ງບາງຢ່າງ. ຜູ້ທີ່ເຊື່ອຫຼາຍຄົນມີຄວາມກັງວົນກັບການຢາກຮູ້ວ່າ ເຂົາເຈົ້າຄວນເຮັດຫຍັງແດ່. ພວກເຂົາຮ້ອງອອກມາເລື້ອຍໆສຳລັບການສອນໃນພາກປະຕິບັດ". ແນວໃດກໍຕາມ, ກ່ອນທີ່ເຈົ້າກັງວົນວ່າ ຈະເຮັດເຮັດຫຍັງ ເຈົ້າຕ້ອງມີຄວາມຮູ້ບາງຢ່າງ. ຈະວ່າແນວໃດ ຖ້າຊ່າງໄມ້ເລີ່ມເຮັດວຽກໜັກໃນການສ້າງເຮືອນ, ແຕ່ລາວບໍ່ຮູ້ວ່າ ປະຕູຄວນຢູ່ໃສ ຫຼືປ່ອງຢ້ຽມຄວນຕັ້ງຢູ່ໃສ? ຈະເປັນແນວໃດຖ້າເຈົ້າຖືກຈ້າງໃຫ້ເຮັດວຽກ ແລະນາຍຈ້າງບອກເຈົ້າໃຫ້ເຂົ້າໄປເຮັດວຽກ, ແຕ່ບໍ່ໄດ້ບອກເຈົ້າວ່າ ຈະເຮັດຫຍັງ ຫຼືຈະເຮັດມັນແນວໃດ? ຜູ້ເຊື່ອຫຼາຍຄົນກໍເປັນແບບນີ້! ພວກເຂົາຫຍຸ້ງກັບກິດຈະກຳຂອງໂບດຫຼາຍ, ແຕ່ພວກເຂົາບໍ່ໄດ້ໃຊ້ເວລາ ເພື່ອສຶກສາພຣະຄຳຂອງພຣະເຈົ້າເພື່ອຈະຮູ້ວ່າຈະເຮັດຫຍັງ ແລະຈະເຮັດແນວໃດ.

ຕາຍຕໍ່ຄວາມບາບ

ໂຣມ 6:2 ກ່າວວ່າ "ຕາຍຕໍ່ຄວາມບາບ" "ປົດປ່ອຍຈາກບາບ." ໃນຂໍ້ທີ 7 ກ່າວວ່າ ພວກເຮົາໄດ້ "ຖືກປົດປ່ອຍຈາກບາບ" ອັນນີ້ໝາຍຄວາມວ່າແນວໃດ? ຖ້າຂ້ອຍ "ຕາຍຕໍ່ຄວາມບາບ" ແລະ "ຖືກປົດປ່ອຍຈາກບາບ" ເປັນຫຍັງຂ້ອຍຍັງເຮັດບາບຢູ່? ພຣະເຈົ້າກ່າວວ່າ "ຊີວິດເກົ່າຂອງພວກເຮົາໄດ້ຖືກຄຶງໄວ້ກັບພຣະອົງ" (ຂໍ້ທີ 6). ຖ້າຕົວຕົນເກົ່າຂອງຂ້ອຍ (ທຳມະຊາດທີ່ເປັນບາບ) ໄດ້ຖືກຄຶງໄວ້, ເປັນຫຍັງຂ້ອຍຈິ່ງຍັງສືບຕໍ່ເຮັດບາບຢູ່?ຂໍໃຫ້ພວກເຮົາຈິນຕະນາການເບິ່ງວ່າ ເດັກນ້ອຍມີພໍ່ທີ່ໂຫດຮ້າຍ ແລະ ມັກໃຊ້ອຳນາດຄອບງຳ(ພໍ່). ພໍ່ກໍກຳລັງດູຖູກ ແລະ ຕີເດັກນ້ອຍເປັນປະຈຳ. ລາວຄວບຄຸມຊີວິດຂອງເດັກດ້ວຍການໃຊ້ຄວາມຢ້ານ ແລະ ຄວາມຮູ້ສຶກຜິດ. ເດັກນ້ອຍກໍເຕີບໃຫຍ່ຂຶ້ນ ແລະ ກາຍເປັນຜູ້ໃຫຍ່. ມື້ໜຶ່ງ ເມື່ອພໍ່ທີ່ໂຫດຮ້າຍຕາຍໄປ. ຕອນນີ້ເດັກນ້ອຍຜູ້ຊາຍມີອາຍຸສີ່ສິບປີ. ພໍ່ທີ່ໄດ້ຕາຍໄປແລ້ວ ແລະຖືກຝັງຢູ່ດິນຈະຍັງສາມາດຄວບຄຸມເດັກນ້ອຍ (ຕອນນີ້ອາຍຸ 40 ປີ) ໄດ້ບໍ? ເຈົ້າອາດຈະຄິດວ່າ ຄຳຕອບແມ່ນ "ບໍ່" ເນື່ອງຈາກພໍ່ຕາຍໄປແລ້ວ ແລະ ບໍ່ສາມາດຕຳນິ ຫຼືຕີເດັກອີກຕໍ່ໄປ. ແຕ່ຄຳຕອບທີ່ຖືກຕ້ອງແມ່ນ "ອາດຈະເປັນໄປໄດ້." ແມ່ນແທ້! ພໍ່ບໍ່ສາມາດດູຖູກ ຫຼື ຕີລູກອີກຕໍ່ໄປ. ແຕ່ເດັກນ້ອຍສ າມາດມີແນວຄິດຊີວິດໄດ້ວ່າ: "ຖ້າພໍ່ຂອງຂ້ອຍຢູ່ທີ່ນີ້, ລາວຈະຮ້າຍ ຂ້ອຍສຳລັບເລື່ອງນີ້." ເມື່ອພະຍາຍາມທີ່ຈະຕັດສິນໃຈ ຜູ້ເປັນລູກອາດຈະຄິດວ່າ: "ພໍ່ຂອງຂ້ອຍຈະບອກໃຫ້ຂ້ອຍເຮັດສິ່ງນີ້ຫຼາຍກວ່າສິ່ງອື່ນ". ເວົ້າອີກຢ່າງໜຶ່ງຄື ຄວາມຄິດຂອງເດັກນ້ອຍຍັງຖືກຄວບຄຸມໂດຍພໍ່ຂອງລາວ ເຖິງແມ່ນວ່າ ພໍ່ໄດ້ຕາຍໄປແລ້ວກໍຕາມ. ເດັກນ້ອຍຄົນນັ້ນບໍ່ໄດ້ຢູ່ໃຕ້ການຄວບຄຸມຂອງພໍ່, ແຕ່ລາວຍັງມີຊີວິດຄືກັບວ່າ ລາວຍັງຖືກຄອບງຳຢູ່ໂດຍພໍ່ຂອງລາວ.

ເຊັ່ນດຽວກັນ, ຊີວິດເກົ່າຂອງພວກເຮົາໄດ້ຖືກປະຫານໂດຍຜ່ານການບັບຕິສະມາຂອງພວກເຮົາເຂົ້າໃນການຕາຍຂອງພຣະຄຣິດ. ພວກເຮົາຈິງບໍ່ໄດ້ຢູ່ໃນການເປັນຂ້າທາດຕໍ່ອຳນາດຂອງຊີວິດເກົ່າຂອງພວກເຮົາອີກຕໍ່ໄປ. ກ່ອນທີ່ພວກເຮົາຈະໄດ້ຮັບຄວາມລອດພົ້ນ, ພວກເຮົາເຄີຍເປັນທາດຂອງບາບກຳ ແລະ ບໍ່ສາມາດເຮັດຫຍັງໄດ້ເພື່ອໃຫ້ຫຼຸດພົ້ນຈາກອິດທິພົນຂອງມັນທີ່ມີຕໍ່ພວກເຮົາ. ບັດນີ້ ພຣະວິນຍານບໍລິສຸດໄດ້ປົດປ່ອຍພວກເຮົາຈາກການເປັນທາດຂອງຄວາມບາບເຮົາເອງ.ບໍ່ມີມະນຸດຄົນໃດຢູ່ໃນໂລກນີ້ເຄີຍມີຊີວິດທີ່ບໍ່ມີບາບ (ຍົກເວັ້ນພຣະເຢຊູຄຣິດ), ແຕ່ບໍ່ວ່າໃນສະຖານະການໃດກໍຕາມທີ່ພວກເຮົາຢູ່, ມັນກໍເປັນໄປໄດ້ທີ່ພວກເຮົາຈະບໍ່ເຮັດບາບ. ມັນເປັນໄປໄດ້ສະເໝີສຳລັບພວກເຮົາທີ່ຈະເຮັດໃນສິ່ງທີ່ຖວາຍກຽດແກ່ອົງພຣະຜູ້ເປັນເຈົ້າ. ຖ້າພວກເຮົາເຮັດບາບກໍມີພຽງເຫດຜົນອັນດຽວເທົ່ານັ້ນ---ເພາະວ່າພວກເຮົາເລືອກທີ່ຈະເຮັດບາບ. ພວກເຮົາຈິງບໍ່ມີຂໍ້ແກ້ຕົວຕໍ່ການເຮັດບາບນັບຕັ້ງແຕ່ຊີວິດເກົ່າຂອງພວກເຮົາໄດ້ຖືກຄຶງໄວ້ທີ່ໄມ້ກາງແຂນ. ພວກເຮົາບໍ່ສາມາດຕຳນິສະພາບວອດລ້ອມຂອງພວກເຮົາ, ຕຳນິຄົນອື່ນໆ ຫຼື ບຸກຄະລິກຂອງພວກເຮົາ (ຫຼືທຳມະ

ຊາດ). ໃນທຸກສະຖານະການທີ່ພວກເຮົາພົບເຫັນຕົວເອງ, ດຽວນີ້ພວກເຮົາຈິ່ງມີອິດສະລະທີ່ຈະເຮັດສິ່ງທີ່ຖືກຕ້ອງ ແລະເປັນທີ່ພໍພຣະໄທພຣະເຈົ້າ. ອັນນີ້ເປັນເພາະການບັບຕິສະມາທີ່ຖືກບັນລະຍາຍໄວ້ໃນພຣະທຳໂຣມບົດທີຫົກ.

ຄວາມດີ ແລະ ຄວາມຊົ່ວຂອງມະນຸດເມື່ອພວກເຮົາເວົ້າເຖິງການເປັນອິດສະລະຈາກບາບ ມັນເປັນສິ່ງສຳຄັນທີ່ຈະເຂົ້າໃຈວ່າ ຄວາມບາບມີສອງດ້ານ. ພຣະເຈົ້າບອກອາດາມບໍ່ໃຫ້ກິນ “ຕົ້ນໄມ້ແຫ່ງຄວາມຮູ້ດີ ແລະ ຊົ່ວ” (ປະຖົມມະການ 2:17). ຖ້າອາດາມແລະເອວາກິນໝາກໄມ້ທີ່ຕ້ອງຫ້າມ, ເຂົາເຈົ້າຈະຮູ້ຈັກ “ຄວາມດີ ແລະ ຄວາມຊົ່ວ” (ປະຖົມມະການ 3:5). ເປັນຫຍັງພຣະເຈົ້າຈະພະຍາຍາມຢຸດອາດາມ ແລະ ເອວາບໍ່ໃຫ້ຮູ້ຈັກ “ຄວາມດີ”? ເຂົາເຈົ້າຈະຮູ້ “ຄວາມດີ” ໄດ້ແນວໃດໂດຍການບໍ່ເຊື່ອຟັງພຣະເຈົ້າ (ກິນຫມາກໄມ້)? ການແກ້ໄຂຂໍ້ປິດສະໜານີ້ແມ່ນເພື່ອເຂົ້າໃຈວ່າ ຂໍ້ພຣະຄຳພີເຫຼົ່ານີ້ເວົ້າເຖິງຄວາມດີຂອງມະນຸດບໍ່ແມ່ນຄວາມດີທີ່ມາຈາກພຣະເຈົ້າ. ຄວາມຊົ່ວຂອງມະນຸດລວມເຖິງສິ່ງຕ່າງໆ ເຊັ່ນ ການຄາດຕະກຳ, ການຂົ່ມຂືນ, ການລັກ, ການດື່ມສິ່ງມຶນເມົາ, ແລະອື່ນໆ. ຄວາມດີຂອງມະນຸດໝາຍເຖິງຄວາມພະຍາຍາມຂອງມະນຸດທີ່ຈະໄດ້ຮັບຄວາມລອດພົ້ນຜ່ານທາງສາສະໜາຂອງຕົນເອງ ແລະຄວາມພະຍາຍາມທີ່ຈະເປັນຄົນດີ.

ເອຊາຢາໄດ້ຂຽນວ່າ "ຄວາມຊອບທຳທັງໝົດຂອງພວກເຮົາເປັນຄືກັບຜ້າເສດ" (ເອຊາຢາ 64: 6). ສັງເກດສິ່ງນີ້ບໍ່ໄດ້ເວົ້າວ່າ ຄົນຊົ່ວ, ສິ່ງຊົ່ວທີ່ພວກເຮົາເຮັດແມ່ນຂີ້ເຫຍື້ອທີ່ເປິເປື້ອນຕໍ່ພຣະເຈົ້າ. ພຣະຄຳພີບອກວ່າ ຄວາມຊອບທຳ (ສິ່ງທີ່ດີ) ທີ່ພວກເຮົາເຮັດແມ່ນຂີ້ເຫຍື້ອຕໍ່ພຣະເຈົ້າ! [ໃນບໍລິບົດນັ້ນ ເອຊາຢາກ່າວກ່ຽວກັບອິດສະຣາເອນ.]

ພວກເຮົາຫຼາຍຄົນບໍ່ໄດ້ຖືກທົດລອງຢ່າງຮຸນແຮງໃຫ້ຂ້າ, ລັກ ຫຼືຂົ່ມຂືນ. ແນວໃດກໍຕາມ, ພວກເຮົາຖືກທົດລອງໃຫ້ຄິດວ່າພວກເຮົາສາມາດໄດ້ຮັບພອນຂອງພຣະເຈົ້າໂດຍການເປັນຄົນດີ ຫຼືພວກເຮົາຄິດວ່າ ພວກເຮົາສາມາດຢຸດພຣະເຈົ້າບໍ່ໃຫ້ລົງ ໂທດພວກເຮົາ ໂດຍການປະຕິບັດທາງສາສະໜາບາງຢ່າງເຊັ່ນ ການໄປໂບດ, ເອົາເງິນໃຫ້ຄຣິສຕະຈັກ, ອະທິຖານ, ແລະອື່ນໆ. ຄວາມຄິດແບບນີ້ເຮັດໃຫ້ອົງພຣະຜູ້ເປັນເຈົ້າ ແລະ ພຣະຜູ້ຊ່ອຍໃຫ້ລອດພົ້ນຂອງພວກເຮົາເສຍກຽດ! ການບັບຕິສະມາທາງວິນຍານຂອງພວກເຮົາໄດ້ປົດປ່ອຍພວກເຮົາອອກຈາກຄວາມຊົ່ວຮ້າຍທີ່ຄວບຄຸມເຮົາ ແລະ ຄວາມດີຂອງມະນຸດ.

"ຢ່າງດຽວກັນນັ້ນແຫຼະ ຈົ່ງຄິດວ່າຕົນເອງຈະຕ້ອງຕາຍຕໍ່ຄວາມບາບຢ່າງແທ້ຈິງ, ແຕ່ມີຊີວິດຕໍ່ພຣະເຈົ້າໂດຍທາງພຣະເຢຊູຄຣິດອົງພຣະຜູ້ເປັນເຈົ້າຂອງພວກເຮົາ." (ໂຣມ 6:11). ປະເດັນທຳອິດໃນການເດີນທາງຝ່າຍຈິດວິນຍານຄື ການຮູ້ກ່ຽວກັບການບັບຕິ ສະມາຂອງພວກເຮົາເຂົ້າໄປໃນການຕາຍຂອງພຣະຄຣິດ. ຂັ້ນຕອນທີສອງຄື ຄິດວ່າ ມັນເປັນຄວາມຈິງ. ເວົ້າງ່າຍໆ ອັນນີ້ໝາຍຄວາມວ່າພວກເຮົາເຊື່ອໃນສິ່ງທີ່ພຣະເຈົ້າກ່າວ. ສະພາບແວດລ້ອມ, ອາລົມຄວາມຮູ້ສຶກຂອງເຮົາ, ແລະຄົນອື່ນໆ ອາດຈະບອກພວກເຮົາວ່າ ພວກເຮົາຍັງເປັນຄົນບາບຢູ່. ຢ່າງໃດກໍຕາມ, ພຣະເຈົ້າບອກວ່າ ພວກເຮົາ “ພົ້ນຈາກບາບແລ້ວ”.ເຈົ້າຈະເຊື່ອຄວາມຮູ້ສຶກຂອງເຈົ້າ ຫຼືຈະເຊື່ອພຣະເຈົ້າ? ສະພາບແວດລ້ອມຂອງເຈົ້າ, ອາລົມຄວາມຮູ້ສຶກຂອງເຈົ້າ, ແລະ ຄົນອື່ນ ອາດຈະຫຼອກລວງເຈົ້າ ແຕ່ພຣະເຈົ້າຈະບອກຄວາມຈິງແກ່ເຈົ້າສະເໝີ. ຖ້າພວກເຮົາຍັງດຳເນີນຊີວິດຢູ່ໃນຄວາມບາບ, ມັນເປັນ ຍ້ອນວ່າ ພວກເຮົາເລືອກທີ່ຈະເຮັດ. ພຣະເຈົ້າເຮັດໃຫ້ມັນເປັນໄປໄດ້ໃນການດຳເນີນຊີວິດຢູ່ໃນໄຊຊະນະ!

## ມອບ

ຂັ້ນຕອນສຸດທ້າຍໃນການເດີນທາງຝ່າຍຈິດວິນຍານແມ່ນການມອບຕົວເຮົາເອງກັບການຮັບໃຊ້ພຣະເຈົ້າ. "ຢ່າມອບອະໄວຍະວະຂອງພວກທ່ານໃຫ້ເປັນເຄື່ອງມືຂອງຄວາມບໍ່ຊອບທຳອີກຕໍ່ໄປ: ແຕ່ຈົ່ງຍອມມອບຕົວໃຫ້ແກ່ພຣະເຈົ້າເໝືອນກັບຄົນທີ່ມີຊີວິດຈາກຄວາມຕາຍແລ້ວ, ແລະ ອະໄວຍະວະຂອງພວກທ່ານເປັນເຄື່ອງມືແຫ່ງຄວາມຊອບທຳຕໍ່ພຣະເຈົ້າ" (ໂຣມ 6:13). ມີບົດເພງປະສານສຽງຮ້ອງຂອງເດັກນ້ອຍທີ່ກ່າວວ່າ "ຈົ່ງລະວັງຕານ້ອຍໆ ຂອງເຈົ້າເບິ່ງອັນໃດ." ແລະ "ຈົ່ງລະວັງຕີນນ້ອຍໆ ເຈົ້າຍ່າງໄປໃສ." ແລະ "ຈົ່ງລະວັງຫູນ້ອຍໆ ເຈົ້າໄດ້ຟັງອັນໃດ." ອັນນີ້ແມ່ນ "ອະໄວຍະວະ" ທີ່ພວກເຮົາຈະມອບໃຫ້ກັບພຣະເຈົ້າ.ໃນອະດີດ ພວກເຮົາໃຊ້ຕາເພື່ອເບິ່ງສິ່ງທີ່ບໍ່ໄດ້ເຮັດໃຫ້ພຣະເຈົ້າພໍໃຈ. ບັດນີ້ ພວກເຮົາສາມາດໃຊ້ຕາຂອງພວກເຮົາເພື່ອຮັບໃຊ້ພຣະເຈົ້າໂດຍການເບິ່ງສິ່ງທີ່ບໍລິສຸດ ແລະເປັນຄວາມຈິງ. ໃນອະດີດ ພວກເຮົາໄດ້ໃຊ້ຕີນຂອງພວກເຮົາໄປຫາບ່ອນທີ່ພວກເຮົາເອົາໃຈໃສ່ກັບການປະພຶດຜິດບາບ. ບັດນີ້ພວກເຮົາສາມາດໃຊ້ຕີນຂອງພວກເຮົາພາພວກເຮົາໄປບ່ອນທີ່ພວກເຮົາຈະເຮັດໃນສິ່ງທີ່ສັດຊື່ ແລະດີ. ໃນອະດີດ ຫູຂອງພວກເຮົາໄດ້ຟັງເລື່ອງຊົ່ວ ແລະ ສິ່ງທີ່ບໍ່ຊອບທຳ. ບັດນີ້ ພວກເຮົາສາມາດໃຊ້ຫູຂອງພວກເຮົາ ເພື່ອຟັງສິ່ງທີ່ໜ້າຮັກ ແລະຊອບທຳໄດ້.

ກ່ອນອື່ນໝົດພວກເຮົາຕ້ອງຮູ້ສິ່ງທີ່ພຣະເຈົ້າໄດ້ເຮັດເພື່ອພວກເຮົາ. ຫຼັງຈາກໄດ້ຮຽນຮູ້ເລື່ອງນີ້ຜ່ານການ ສຶກສາພຣະຄໍາພີແລ້ວ, ພວກເຮົາຕ້ອງຄິດເບິ່ງວ່າ ມັນເປັນແນວນັ້ນ. ພວກເຮົາຕ້ອງເຊື່ອສິ່ງທີ່ພຣະເຈົ້າໄດ້ກ່າວ. ທ້າຍສຸດນີ້, ພວກເຮົາຕ້ອງຍອມໃຫ້ອະໄວຍະວະຂອງພວກເຮົາຮັບໃຊ້ພຣະເຈົ້າ. ອັນນີ້ແມ່ນຫົນທາງສູ່ຄວາມສຸກ ແລະ ໄຊຊະນະ!

ຄຳຖາມທົບທວນບົດຮຽນ 14 - ການບັບຕິສະມາ - ສ່ວນທີ 2

ຖືກ ຫຼື ຜິດ

1. ພຣະຄຸນຂອງພຣະເຈົ້າຍິ່ງໃຫຍ່ກວ່າບາບເກືອບທັງໝົດ.
2. ພຣະຄຳພີສອນວ່າ ພວກເຮົາມີຊີວິດຢູ່ເພື່ອເຮັດບາບ.
3. ພວກເຮົາຕ້ອງພະຍາຍາມເຮັດໃຫ້ມະນຸດເກົ່າຂອງພວກເຮົາຕາຍໄປ ໂດຍການເຊື່ອຟັງພຣະເຈົ້າ.
4. ຢູ່ໃນປຶ້ມຂອງເອຊາຢາໄດ້ກ່າວວ່າ ຄວາມຊອບທຳຂອງອິດສະຣາເອນໄດ້ເປັນສິ່ງທີ່ເປື້ອນເປິຕໍ່ພຣະເຈົ້າ.

ຄຳຖາມແບບປາລະໄນ

5. ຂັ້ນຕອນສຸດທ້າຍຂອງການເດີນໄປດ້ວຍໄຊຊະນະແມ່ນເພື່ອ:
   ກ. ຮັບບັບຕິສະມາດ້ວຍນໍ້າ
   ຂ. ຮັກສາຄຳສັ່ງບັນຍັດສິບປະການ
   ຄ. ພະຍາຍາມເຮັດໃຫ້ດີທີ່ສຸດ
   ງ. ໃຫ້ສະມາຊິກຂອງທ່ານຮັບໃຊ້ພຣະເຈົ້າ

6 ປະເດັນທຳອິດໃນຊີວິດຝ່າຍຈິດວິນຍານຂອງພວກເຮົາແມ່ນ:
   ກ. ສາລະພາບບາບກຳຂອງທ່ານ
   ຂ. ຮູ້ສິ່ງທີ່ພຣະເຈົ້າໄດ້ເຮັດສຳລັບພວກເຮົາ
   ຄ. ອະທິຖານທຸກວັນ
   ງ. ໄປໂບດເປັນປະຈຳ

7. ເລື່ອງເລົ່າຂ້າງເທິງກ່ຽວກັບພໍ່ທີ່ໂຫດຮ້າຍ ແລະ ລູກໄດ້ສອນວ່າ:
   ກ. ບາງຄັ້ງພຣະເຈົ້າໂຫດຮ້າຍ
   ຂ. ພວກເຮົາບໍ່ສາມາດເອົາຊະນະອຳນາດຂອງບາບໄດ້
   ຄ. ພວກເຮົາເຮັດບາບພຽງແຕ່ຍ້ອນວ່າ ພວກເຮົາເລືອກທີ່ຈະເຮັດ
   ງ. ຊີວິດເກົ່າຂອງພວກເຮົາບໍ່ເຄີຍຕາຍແທ້

ຕື່ມໃສ່ຊ່ອງຫວ່າງ

8. ອາດາມຖືກບອກວ່າ ບໍ່ໃຫ້ກິນຕົ້ນໄມ້ແຫ່ງຄວາມຮູ້ ແລະ___________________
9. "ເຊັ່ນດຽວກັນ, "ຢ່າງດຽວກັນນັ້ນແຫຼະ ຈົ່ງຄິດວ່າຕົນເອງຈະຕ້ອງ_____________ຕໍ່ຄວາມບາບຢ່າງແທ້ຈິງ, "
10.__ພວກເຮົາສາມາດມີໄຊຊະນະເໜືອຄວາມບາບໄດ້ເພາະວ່າພວກເຮົາໄດ້________________ເຂົ້າໄປໃນການຕາຍຂອງພຣະເຢຊູຄຣິດແລ້ວໂດຍພຣະວິນຍານບໍລິສຸດ.